ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ
ກົມອາຫານ ແລະ ຢາ
ໂທ: 214013-14, ແຟັກ: 213495

ເລກທີ 3865 /ກອຢ
ນະຄອນຫຼວງວຽງຈັນ, ວັນທີ 19 APR 2023

# ໜັງສືແຈ້ງການ

**ເຖິງ**: ທ່ານຫົວໜ້າພະແນກສາທາລະນະສຸກແຂວງ, ນະຄອນຫຼວງ, ບໍລິສັດ, ຫ້າງຮ້ານ ແລະ ປະຊາຊົນໃນທົ່ວປະເທດ.

**ເລື່ອງ**: ຫ້າມບໍລິໂພກ ແລະ ຈໍາໜ່າຍ ຜະລິດຕະພັນອາຫານ ເຝີເຮືອເຄິ່ງສໍາເລັດຮູບ (ກາເລີຣົດ) "Lerros Instant Boat Noodle".

- ອີງຕາມ ກົດໝາຍວ່າດ້ວຍອາຫານ, ສະບັບເລກທີ 33/ສພຊ, ລົງວັນທີ 24 ກໍລະກົດ 2013.
- ອີງຕາມ ໜັງສືແຈ້ງການ ຂອງ ສໍານັກງານຄະນະກໍາມະການອາຫານ ແລະ ຢາ ແຫ່ງລາຊະອານາຈັກໄທ, ສະບັບລົງວັນທີ 05 ເມສາ 2023.

ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ຄະນະກໍາມະການຄຸ້ມຄອງອາຫານ ແລະ ຢາ ແຫ່ງລາຊະອານາຈັກໄທ ກວດພົບຜະລິດຕະພັນອາຫານບັນຈຸຖົງພຼາສຕິກສີແດງ ສະຫຼາກລະບຸ ເຝີເຮືອເຄິ່ງສໍາເລັດຮູບ (ກາເລີຣົດ) "Lerros Instant Boat Noodle" ເລກ ອ.ຢ ໄທ 12-2-01765-6-0002 ວັນທີຜະລິດ 01.02.2023 ວັນໝົດອາຍຸ 01.05.2023, ຜະລິດໂດຍ: ກ້ວຍຕຽວເລີຣົດ ເລກທີ 9/10 ຕໍາບົນບ້ານໃໝ່ ຈັງຫວັດນົນທະບຸລີ, ຈັດຈໍາໜ່າຍໂດຍ: ບໍລິສັດ ເລີຣົດ ອິນເຕີຟູດ ຈໍາກັດ ເລກທີ408/6 ໝູ່ 7 ຕໍາບົນ ບາງປູໃໝ່ ອໍາເພີເມືອງສະມຸດປາການ ປະເທດໄທ (ຕາມຮູບພາບທີ່ໄດ້ຕິດຄັດ) ມີການປົນເປື້ອນ ເຊື້ອຈຸລິນຊີ Bacillus cereus 6,600CFU/ກຣາມ ເກີນມາດຕະຖານກໍານົດ ຊຶ່ງສາມາດເຮັດໃຫ້ເກີດພະຍາດຖອກທ້ອງ, ອາຫານເປັນພິດ ແລະ ມີຄວາມອັນຕະລາຍຕໍ່ສຸຂະພາບ.

ດັ່ງນັ້ນ, ກົມອາຫານ ແລະ ຢາ ຈຶ່ງຮຽນມາຍັງທ່ານເພື່ອພິຈາລະນະຊີ້ນໍາເຈົ້າໜ້າທີ່ກວດກາອາຫານ ລົງຕິດຕາມ ແລະ ເຝົ້າລະວັງການນໍາເຂົ້າ ແລະ ຈໍລະຈອນຕາມທ້ອງຕະຫຼາດ ແລະ ແຈ້ງມາຍັງຜູ້ບໍລິໂພກ ຫ້າມຊື້, ຫ້າມບໍລິໂພກ, ຈໍາໜ່າຍ ແລະ ນໍາເຂົ້າ ຜະລິດຕະພັນດັ່ງກ່າວຕາມທີ່ໄດ້ກ່າວໄວ້ຂ້າງເທິງນີ້.

ສະນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ໃຫ້ຄວາມຮ່ວມມືຈັດຕັ້ງປະຕິບັດຕາມທາງຄວນດ້ວຍ.

ເຊັນແທນ
ຫົວໜ້າກົມ

ກະຊວງສາທາລະນະສຸກ
ກົມອາຫານ ແລະ ຢາ

ພ.ວຽງໄຊ ວັນສີລາລົມ